Seattle

EQUITY & ENVIRONMENT INITIATIVE

**The Environmental Justice Fund 2020**

ໂຄງການຂອງເມືອງຊີແອັດເທີລ ຄຸ້ມຄອງບໍລິຫານໂດຍ The Bullitt .Foundation

**The Environmental Justice Fund** (ກອງທຶນເພື່ອຄວາມຍຸຕິທຳດ້ານສິ່ງແວດລ້ອມ) ຕອນນີ້ກຳລັງເປີດຮັບຄຳຮ້ອງສະໝັກຮັບທຶນ (https://seattle.surveymonkey.com/r/EJFundApp2020) ແລະ **ກຳນົດເວລາໃນການສະໝັກແມ່ນວັນສຸກ ທີ 25 ເດືອນກັນຍາ !** ມີທຶນຈຳນວນ $500,000 ຈາກເມືອງຊີແອັດເທີລ ແລະຈະມີທຶນສູງສຸດເຖິງ $60,000 ຕໍ່ແຜນສະເໜີທຶນໂຄງການໜຶ່ງ. ການໃຫ້ທຶນນີ້ສະໜັບສະໜູນຄວາມພະຍາຍາມທີ່ນຳໂດຍ ແລະ ໃຫ້ປະໂຫຍດແກ່ຄົນທີ່ຖືກກະທົບຫຼາຍທີ່ສຸດຈາກບັນຫາສິ່ງແວດລ້ອມ ແລະຈາກການປ່ຽນແປງສະພາບອາກາດ, ກ່າວຄື: ຄົນຜິວດຳ, ຊາວພື້ນເມືອງດັ້ງເດີມ, ຄົນຜິວສີ, ຜູ້ອົບພະຍົບ, ຜູ້ລີ້ໄພ, ຄົນທີ່ມີລາຍໄດ້ຕ່ຳ, ໄວໜຸ່ມ ແລະ ຜູ້ສູງອາຍຸທີ່ອາໄສ, ຮຽນໜັງສື, ເຮັດວຽກ, ຫຼິ້ນ, ແລະປະຕິບັດສາດສະໜາໃນເມືອງຊີແອັດເທີລ.

The Office of Sustainability & Environment (OSE) (ຫ້ອງການຄວາມຍືນຍົງ ແລະ ສິ່ງແວດລ້ອມ) ຮູ້ວ່າ COVID-19 ກຳລັງສົ່ງຜົນກະທົບຕໍ່ຊຸມຊົນຂອງພວກເຮົາໃນແບບທີ່ພວກເຮົາຫາກໍຈະເລີ່ມຕົ້ນເຂົ້າໃຈໄດ້. ນັ້ນແມ່ນເຫດຜົນທີ່ພວກເຮົາຕັ້ງໃຈໃຫ້ທຶນໂຄງການຕ່າງໆທີ່ແກ້ໄຂຜົນກະທົບຈາກ COVID-19 ທີ່ກ່ຽວຂ້ອງກັບສຸຂະພາບຂອງຊຸມຊົນ ແລະ ສິ່ງແວດລ້ອມ. OSE ຈະຈັດກອງປະຊຸມແບບສະເໝືອນຈິງສອງຄັ້ງ ເພື່ອໃຫ້ຂໍ້ມູນໃນວັນທີ **10** ແລະ **14** ເດືອນກັນຍາ ເພື່ອອະທິບາຍ: ພາບລວມຂອງ Environmental Justice Fund, ຄຸນສົມບັດສຳລັບຄຳຮ້ອງຂໍທຶນທີ່ເຂັ້ມແຂງ, ຂະບວນການພິຈາລະນາ ແລະເພື່ອຕອບຄຳຖາມຕ່າງໆທີ່ທ່ານອາດຈະມີ. ກວດເບິ່ງ ເວັບໄຊ ເພື່ອລົງທະບຽນ ແລະ ຊອກຮູ້ເພີ່ມເຕີມ. ຖ້າທ່ານມີຄຳຖາມໃດໆ, ກະລຸນາອີເມວຫາ equityenviro@seattle.gov ຫຼື ໂທຫາ (206)615-0817.